ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

**ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ**
**BANQUE POUR LE COMMERCE EXTERIEUR LAO PUBLIC**

ທັນສະໄໝ ວ່ອງໄວ ໝັ້ນໃຈ
MODERN QUICK RELIABLE

ສຳນັກງານໃຫຍ່

ເລກທີ: 3035 /ທຄຕລ 2022

ນະຄອນຫຼວງວຽງຈັນ, ວັນທີ: 21 NOV 2022

# ໜັງສືແຈ້ງເຊີນ

**ເຖິງ:** ບັນດາໂຮງພິມ ແລະ ບໍລິສັດ ທີ່ເຮັດທຸລະກິດກ່ຽວກັບສິ່ງພິມ ຢູ່ພາຍໃນ ສປປ ລາວ.

**ເລື່ອງ :** ເຊີນເຂົ້າຮ່ວມການປະມູນລາຄາ ຜະລິດປື້ມບັນທຶກປົກແຂງ ທຄຕລ (ສີແດງ).

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ຂໍແຈ້ງມາຍັງ ບັນດາໂຮງພິມ ແລະ ບໍລິສັດ ທີ່ເຮັດທຸລະກິດກ່ຽວກັບສິ່ງພິມ ທີ່ມີຄວາມສົນໃຈເຂົ້າຮ່ວມການປະມູນລາຄາ ປື້ມບັນທຶກປົກແຂງ ຕາມລາຍລະອຽດລຸ່ມນີ້:

| ລ/ດ | ລາຍການ | ຄຸນລັກສະນະ |
|---|---|---|
| 1 | ປື້ມບັນທຶກປົກແຂງ ທຄຕລ (ສີແດງ):<br>**ຈຳນວນ 5.000 ຫົວ** | - ຂະໜາດ A5, ໃສ່ບ່ອງສີຂາວເຕັມເຫຼັ້ມ, ຂອບປື້ມລິບລ່ຽມ<br>- ໜ້າ+ຫຼັງ ປົກແຂງ ພິມສີດ້ານ, ເຈ້ຍກາກຕົງ ເບີ 24.<br>- ເຈ້ຍດ້ານໃນ (ໂຄສະນາຜະລິດຕະພັນ) ໃຊ້ເຈ້ຍອາດມັນ 120 ແກຣມ ຈຳນວນ 06 ໜ້າ (ພິມ 03 ໃບ ໜ້າ-ຫຼັງ).<br>- ເຈ້ຍຂາວປອນໃຊ້ຂຽນ 80 ແກຣມ ຈຳນວນ 200 ໜ້າ (100 ໃບ) (ບໍ່ລວມໜ້າປົກ ແລະ ເຈ້ຍດ້ານໃນ (ໂຄສະນາຜະລິດຕະພັນ)).<br>- ການຫຸ້ມຫໍ່: 10 ຫົວ/ແພັກ, 10ແພັກ/ແກັດ. |

❖ **ເງື່ອນໄຂຂອງຜູ້ສະໜອງທີ່ຕ້ອງການຍື່ນຊອງປະມູນຕ້ອງປະກອບເອກະສານ ດັ່ງນີ້:**

❖ **ເອກະສານຊອງທີ 1 (ບໍ່ປິດຊອງ):**

1. ປະກອບເອກະສານໃນນາມນິຕິບຸກຄົນ ທີ່ດຳເນີນທຸລະກິດກ່ຽວກັບສິ່ງພິມ ແລະ ດຳເນີນທຸລະກິດຢ່າງໜ້ອຍ 02 ປີຂຶ້ນໄປ ແລະ ໃຫ້ສຳເນົາໃບທະບຽນວິສາຫະກິດ, ໃບອະນຸຍາດດຳເນີນທຸລະກິດປະຈຳປີ, ໃບຢັ້ງຢືນການເສຍອາກອນຢ່າງໜ້ອຍ 2021 ແລະ ເອກະສານກ່ຽວກັບຜົນງານການຜະລິດປື້ມ ຜ່ານມາ. ສາມາດຍື່ນເອກະສານ ນັບຈາກ ວັນນີ້ຈົນເຖິງ ວັນພະຫັດ ວັນທີ 24/11/2022 ກ່ອນເວລາ 11:00 ໂມງ ໂດຍການສົ່ງຟາຍສະແກນເປັນ PDF ເຂົ້າມາທີ່ E-mail: procurement@bcel.com.la
2. ຕ້ອງມີຄວາມສາມາດຈັດພິມປື້ມຈຳນວນທັງໝົດຂ້າງເທິງສຳເລັດພາຍໃນ 20 ວັນລັດຖະການ ຫຼັງຈາກຜ່ານແບບ ແລະ ໄດ້ຮັບໜັງສືສັ່ງຊື້ ພ້ອມທັງຮັບປະກັນສິນຄ້າ 06 ເດືອນ ຂຶ້ນໄປ.
3. ໃຫ້ນຳຕົວຢ່າງມາຜ່ານ 01 ຊຸດ ຫຼື 01 ຫົວ (ພິມ Offset/Digital ຫຼື ພິມ Laser ກໍ່ໄດ້ ຕາມ Spec ຂ້າງເທິງ) ແລ້ວຈັດສົ່ງ ກ່ອນ ວັນພະຫັດ ວັນທີ 24/11/2022, ທີ່ ປ່ອງຂາເຂົ້າ-ຂາອອກ, ຊັ້ນ 04, ອາຄານ C, ທຄຕລ ສຳນັກງານໃຫຍ່).
4. ສຳລັບ Artwork Link ສາມາດປະສານງານໄດ້ທີ່ ເບີຕິດຕໍ່ 021 213 200-414 ແລະ E-mail: procurement@bcel.com.la



ເລກທີ 01, ຖະໜົນ: ປາງຄຳ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ.ນ: 2925, ໂທລະສັບ: (856-21) 213200-1, 222495, 217904, 217898-9
ແຟັກ: (856-21) 213202, 223012, 223245, Website: http:/www.bcel.com.la, E-mail: bcelhqv@bcel.com.la, SWIFT Code: COEBLALA

❖ <u>ເອກະສານຊອງທີ 2 (ປິດຊອງ)</u>:

1. ທຄຕລ ຈະແຈ້ງສະເພາະຜູ້ທີ່ຜ່ານເງື່ອນໄຂ ຮອບທີ 01 ເທົ່ານັ້ນ ເພື່ອເຂົ້າມາຍື່ນຊອງລາຄາດ້ວຍຕົນເອງ ຫຼື ສົ່ງຜູ້ຕາງໜ້າເຂົ້າມາຮ່ວມໃນວັນຖານ, ທີ **06/12/2022 ເວລາ 09:00** ໂມງ. ສະນັ້ນ, ຜູ້ສະໜອງຈະຕ້ອງຖືຊອງລາຄາມາດ້ວຍຕົນເອງ ຫຼື ສົ່ງຜູ້ຕາງໜ້າເຂົ້າຮ່ວມທີ່ຫ້ອງປະຊຸມຊັ້ນ 03 ຕຶກ C.
2. ໃບສະເໜີລາຄາໃຫ້ລະບຸລາຄາຫົວໜ່ວຍ ແລະ ລວມມູນຄ່າອາກອນທັງໝົດເປັນສະກຸນເງິນກີບໃຫ້ຄົບຖ້ວນ ພ້ອມທັງລະບຸມື້ໝົດກຳນົດເວລາໃນໃບສະເໜີລາຄາດັ່ງກ່າວ (Expire date) ຢ່າງໜ້ອຍ 20 ວັນລັດຖະການ.
3. ບໍລິສັດຜູ້ສະໜອງຕ້ອງກຳນົດສະເປັກ ພ້ອມທັງລະບຸເງື່ອນໄຂຕ່າງໆ ມາໃຫ້ຄົບຖ້ວນ ແລະ ໃຫ້ກົງກັບຄວາມຕ້ອງການໃນຕາຕະລາງຂ້າງເທິງນັ້ນ.
4. ຜູ້ສະໜອງຕ້ອງວາງເງິນຄ້ຳປະກັນການປະມູນຕ່ຳສຸດ 2% ຂອງມູນຄ່າທັງໝົດ ໂດຍໜັງສືຄ້ຳປະກັນທີ່ອອກໂດຍທະນາຄານພາຍໃນປະເທດ **(ວັນໝົດອາຍຸໜັງສືຄ້ຳປະກັນຕ້ອງເຖິງ ວັນທີ 07/01/2023)** ຫຼື ແຊັກທີ່ວີຊ່າແລ້ວ (ທຄຕລ ບໍ່ຮັບເງິນສົດ), ພາຍຫຼັງປະກາດຜົນ ທຄຕລ ຈະສົ່ງໜັງສືຄ້ຳປະກັນດັ່ງກ່າວຄືນ.

❖ <u>**ໝາຍເຫດ**</u>:

1. ທຄຕລ ຂໍສະຫງວນສິດ ປະຕິເສດຜູ້ສະໜອງທີ່ປະກອບເອກະສານ ບໍ່ຄົບຖ້ວນ ຫຼື ບໍ່ຖືກຕ້ອງຕາມການກຳນົດຂ້າງເທິງ, ການຄັດເລືອກຜູ້ສະໜອງແມ່ນຈະຄັດເລືອກຈາກຫຼາຍເງື່ອນໄຂ (ບໍ່ໄດ້ຄັດເລືອກຈາກລາຄາພຽງຢ່າງດຽວ).
2. ການຊຳລະແມ່ນຈ່າຍເງິນງວດດຽວ 100% ຕາມມູນຄ່າສັ່ງຊື້ ພາຍຫຼັງໄດ້ຮັບເຄື່ອງຄົບຖ້ວນ ພ້ອມທັງໄດ້ຮັບການຢັ້ງຢືນຈາກພາກສ່ວນກ່ຽວຂ້ອງ ແລະ ກວດກາຄວາມຖືກຕ້ອງຈາກທັງສອງຝ່າຍ ພາຍໃນໄລຍະ 30 ວັນລັດຖະການ.

❖ **ເງື່ອນໄຂຂອງສັນຍາລະຫວ່າງ ທຄຕລ ແລະ ຜູ້ສະໜອງທີ່ຊະນະການປະມູນ:**

- ຜູ້ຊະນະການປະມູນຕ້ອງໄດ້ຜະລິດປຶ້ມຕົວຈິງ 01 ຫົວ ທີ່ຖືກຕ້ອງຕາມ Spec ທີ່ ທຄຕລ ລະບຸ ມາຜ່ານຕາມ Artwork ທີ່ ທຄຕລ ກຳນົດ ພາຍໃນ 07 ວັນ ແລະ ຕ້ອງມີຄວາມສາມາດຈັດພິມຈຳນວນທັງໝົດສຳເລັດພາຍໃນ 20 ວັນລັດຖະການ ນັບຈາກມື້ຮອງຮັບແບບ ແລະ ໄດ້ຮັບໜັງສືສັ່ງຊື້.
- ຖ້າຜູ້ຊະນະການປະມູນປະຕິເສດການເຊັນສັນຍາ ຫຼື ຜູ້ຊະນະການປະມູນຕ້ອງໄດ້ຈ່າຍຄ່າເສຍຫາຍໃຫ້ແກ່ ທຄຕລ ໃນອັດຕາ 2% ຂອງມູນຄ່າລວມທີ່ສະເໜີປະມູນ.
- ຜູ້ທີ່ຊະນະການປະມູນຈະໄດ້ເຊັນສັນຍາກັບ ທຄຕລ ແລະ ຄ່າທຳນຽມໃນການຈົດທະບຽນສັນຍາ ແມ່ນມອບໃຫ້ເປັນຄວາມຮັບຜິດຊອບຂອງຜູ້ສະໜອງ.

ດັ່ງນັ້ນ, ຈຶ່ງອອກແຈ້ງເຊີນມາຍັງທ່ານທີ່ມີຄວາມສົນໃຈເຂົ້າຮ່ວມຍື່ນຊອງປະມູນໃນຄັ້ງນີ້.

**ຜູ້ອຳນວຍການ**

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC

**ສາຍສະໝອນ ຈັນທະຈັກ**

ສອບຖາມຂໍ້ມູນເພີ່ມຕື່ມທີ່: ເບີຕິດຕໍ່ 021 213 200-414, E-mail: procurement@bcel.com.la

# (ຕົວຢ່າງ) ລາຍລະອຽດເອກະສານການປະມູນ (ກະລຸນາຕື່ມຂໍ້ມູນ ແລະ ເຊັນຢັ້ງຢືນ)

- ອີງຕາມໃບແຈ້ງປະມູນ ສະບັບເລກທີ ............/ທຄຕລ, ລົງວັນທີ ......................

| ລ/ດ | ຜູ້ສະໜອງ | ເງື່ອນໄຂ | | | | | | | | | ໝາຍເຫດ |
|---|---|---|---|---|---|---|---|---|---|---|---|
| | | ໃບທະບຽນວິສາຫະກິດ | ໃບຢັ້ງຢືນການເສຍອາກອນ | ໃບອະນຸຍາດດຳເນີນທຸລະກິດ | ໄລຍະເວລາໃນການດຳເນີນທຸລະກິດ | ຜົນງານຜ່ານມາ (ທີ່ເຄີຍສະໜອງໃຫ້ພາກສ່ວນໃດແນ່) | ປະເພດ / ວັດສະດຸ / ຍີ່ຫໍ້ສິນຄ້າ | ປະເທດຜະລິດ | ການຮັບປະກັນສິນຄ້າ | ກຳນົດສົ່ງ (ວັນ) | |
| 1 | ບ/ສ......... | (xxx/ 02.01.2015) | (xxx/ 02.01.2015) | (xxx/ 02.01.2015) | .... ປີ | (ໃຫ້ລະບຸ) | | ພາຍນ ຫຼື ຕ່າງປະເທດ | .... ປີ | ...... | |

ໝາຍເຫດ: ຂໍ້ມູນທີ່ແຈ້ງຂ້າງເທິງນີ້ ເປັນຄວາມຈິງທຸກປະການ, ຖ້າມີຂໍ້ມູນຜິດພາດ ຂ້າພະເຈົ້າຂໍຮັບຜິດຊອບເອງທຸກປະການ.

ນະຄອນຫຼວງວຽງຈັນ, ວັນທີ ........................
ຜູ້ອຳນວຍການບໍລິສັດ

ຜູ້ປະສານງານບໍລິສັດ:
ຊື່:
ໂທ:

# 1 ຮູບແບບປຶ້ມ (Mock up)

<table>
<tr><td>ໜ້າປົກແຂງ<br>
</td><td>ຫຼັງປົກແຂງ<br>
</td></tr>
<tr><td>
</td><td>
</td></tr>
</table>

# 2 ໜ້າປົກແຂງ


ທຄຕລ
BCEL
ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC
1555
OneCare
BCEL Bank
www.bcel.com.la

# 3 Artwork 6 ພະລິດຕະພັນທີ່ຢູ່ດ້ານໃນປຶ້ມ

*1/ Onebank*



## *2/ ຜະລິດຕະພັນບັດ*



*3/ ບໍລິການຮັບຊາລະຜ່ານ QR Code*



*4/ BCELOne*


ທຄຕລ
BCEL
ທະນາຄານເທິງມືຖື ເພື່ອທຸກຄົນ
BCEL One, One for All
BCEL One
ຜະລິດຕະພັນ BCEL One
BCEL One App

*5/ ຜະລິດຕະພັນສິນເຊື່ອ*



*໒/ບໍລິການໂອນເງິນດ້ວຍ SWIFT GPI*




---

<u>**3 ໜ້າເຈ້ຍຂາວສໍາລັບຂຽນບັນທຶກ**</u> *(ຈໍານວນ 200 ໜ້າ)*




---

# 5 ຕິດຕໍ່ ສາຂາ ທົ່ວລະບົບ

## ສຳນັກງານໃຫຍ່ ແລະ ສາຂາທົ່ວປະເທດ

ສຳນັກງານໃຫຍ່ / Headquarters; E-mail:bcelqv@bcel.com.la
Tel: 021 213200 / Fax 021 213202

ສາຂາ ຜົ້ງສາລີ / Phongsaly Branch; E-mail:bcelpsl@bcel.com.la
Tel: 088 210264/ Fax 088 210221

ສາຂາ ຫຼວງນ້ຳທາ / Louangnamtha Branch; E-mail:bcellnt@bcel.com.la
Tel: 086 211315 / Fax 086 212334

ສາຂາ ອຸດົມໄຊ / Udomxay Branch; E-mail:bcelodx@bcel.com.la
Tel: 081 211260 / Fax 081 211925

ສາຂາ ບໍ່ແກ້ວ / Bokeo Branch; E-mail:bcelbok@bcel.com.la
Tel: 084 215031 / Fax 084 215033

ສາຂາ ຫົວພັນ / Houaphonh Branch; E-mail:bcelhp@bcel.com.la
Tel: 064 312112 / Fax 064 312019

ສາຂາ ຊຽງຂວາງ / Xiengkhoung Branch; E-mail:bcelxkh@bcel.com.la
Tel: 061 260014 / Fax 061 213293

ສາຂາ ໄຊຍະບູລີ / Xayabuly Branch; E-mail:bcelxyb@bcel.com.la
Tel: 074 260038 / Fax 074 211318

ສາຂາ ຫຼວງພະບາງ / Loungphabang Branch; E-mail:bcellpb@bcel.com.la
Tel: 071 252712 / Fax 071 260598

ສາຂາ ວັງວຽງ / Vangvieng Branch; E-mail:bcelvv@bcel.com.la
Tel: 023 511434 / Fax 023 511433

ສາຂາ ໂພນໂຮງ / Phonhong Branch; E-mail:bcelqv@bcel.com.la
Tel: 023 212179 / Fax 023 212173

ສາຂາ ນະຄອນຫຼວງວຽງຈັນ / Vientiane capital Branch; E-mail:bcelvt@bcel.com.la
Tel: 021 213205 / Fax 021 219765

ສາຂາ ດົງໂດກ / Dongdok Branch; E-mail:bceldd@bcel.com.la
Tel: 021 771495 / Fax 021 771496

ສາຂາ ໄຊເສດຖາ / Saysettha Branch; E-mail:Saysettha_branch@bcel.com.la
Tel: 021 844200 / Fax 021 844209

ສາຂາ ບໍລິຄຳໄຊ / Bolikhamxai Branch; E-mail:bcelblx@bcel.com.la
Tel: 054 280112 / Fax 054 790918

ສາຂາ ຄຳມ່ວນ / Khammouan Branch; E-mail:bcelkmn@bcel.com.la
Tel: 051 212686 / Fax 051 212685

ສາຂາ ສະຫວັນນະເຂດ / Savannaket Branch; E-mail:bcelsvn@bcel.com.la
Tel: 041 212261 / Fax 041 215049

ສາຂາ ສາລະວັນ / Salavan Branch; E-mail:bcelslv@bcel.com.la
Tel: 034 211994 / Fax 034 212037

ສາຂາ ເຊກອງ / Sekong Branch; E-mail:bcelsek@bcel.com.la
Tel: 038 211687 / Fax 038 211689

ສາຂາ ຈຳປາສັກ / Champasa kBranch; E-mail:bcelcps@bcel.com.la
Tel: 031 212770 / Fax 031 212974

ສາຂາ ອັດຕະປື / Attapeu Branch; E-mail:bcelatp@bcel.com.la
Tel: 036 210062 / Fax 036 210063

ໜ່ວຍບໍລິການ ໄຊສົມບູນ / xaysomboun service Unit; E-mail:bcelqv@bcel.com.la
Tel: 026 210097 / Fax 026 210100

-----------------------------------------------------------------------------

## <u>6 ປົກແຂງດ້ານຫຼັງ</u>

